ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----===000===----

ກະຊວງກະສິກຳ-ປ່າໄມ້ ເລກທີ 0377/ກປ

# ບົດແນະນຳ

ເຖິງ : - ພະແນກກະສິກຳ-ປ່າໄມ້ແຂວງ, ກຳແພງນະຄອນ ແລະເຂດພິເສດ

- ຫ້ອງການກະສິກຳ-ປ່າໄມ້ເມືອງ

ເລື້ອງ: ການນຳໃຊ້ຊັບພະຍາກອນປ່າໄມ້ ຕາມສິດປະເພນີ.

ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວເຮົາ ແມ່ນມີຫລາຍຊົນຊາດ ຊົນເຜົ່າ ແລະ ມີວັດທະນາທຳຮີດຄອງປະເພນີ ແຕກຕ່າງກັນ, ປະຊາຊົນລາວເຮົາ ເກືອບ90% ມີການດຳລົງຊີວິດຕິດພັນກັບທຳມະຊາດ ໂດຍສະເພາະ ແມ່ນອາໃສແຫລ່ງຊັບພະຍາກອນປ່າໄມ້ ເປັນບ່ອນເພິ່ງພາໃນການທຳມາຫາກິນປະຈຳວັນ.

ແຕ່ເວົ້າເຖິງສິດນຳໃຊ້ ຊັບພະຍາກອນປ່າໄມ້ຕາມປະເພນີແລ້ວ ປະຊາຊົນລາວເຮົາແມ່ນ ໄດ້ມີມູນເຊື້ອມາແຕ່ດົນນານຫລາຍຊົ່ວຄົນເຊັ່ນການເອົາພືນ, ການເກັບເຄື່ອງປ່າຂອງດົງ, ເອົາຢາປົວພະຍາດແລະອື່ນໆອີກຫລາຍຢ່າງ. ການນຳໃຊ້ສິດປະເພນີດັ່ງກ່າວນີ້ ມັນເປັນຮີດຄອງແຕ່ເຄົ້າເດີມ ແລະ ຈະສືບຕໍ່ກັນໄປຢ່າງບໍ່ສິ້ນສຸດ ໂດຍສະເພາະແມ່ນຢູ່ໃນເຂດຊົນນະບົດ ຫ່າງໄກຊອກຫລີກ.

ເພື່ອເຮັດໃຫ້ຊັບພະຍາກອນປ່າໄມ້ມີການດຸ່ນດ່ຽງ ແລະຄົງຕົວກັບການນຳໃຊ້ສິດຕາມປະເພນີຂອງບັນດາເຜົ່າຊົນຕ່າງໆ ແລະໃຫ້ປະຊາຊົນບັນດາເຜົ່າໄດ້ເປັນເຈົ້າການຄຸ້ມຄອງປົກປັກຮັກສາແນ່ ໃສ່ໃຫ້ຊັບພະຍາກອນໃນປ່າໄມ້ ດັ່ງກ່າວບໍ່ໃຫ້ມີການບົກແຫ້ງເປັນຈັກເທື່ອນັ້ນ :

ກະຊວງກະສິກຳ-ປ່າໄມ້ ຈຶ່ງໄດ້ອອກບົດແນະນຳກ່ຽວກັບສິດນຳໃຊ້ຊັບພະຍາກອນປ່າໄມ້ ຕາມປະເພນີຕາມຂໍ້ຕົກລົງສະບັບເລກທີ0054/ກປ, ລົງວັນທີ 07/03/1996 ດັ່ງນີ້ :

1. ໃຫ້ພະແນກກະສິກຳ-ປ່າໄມ້ຂອງແຂວງ, ເຂດພິເສດ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງ ຫລື ບັນດາໂຄງການທີ່ມີສ່ວນພົວພັນກັນນັ້ນຈັດຕັ້ງ ເຜີຍແຜ່ອົບຮົມໃຫ້ແກ່ປະຊາຊົນບັນດາເຜົ່າຮັບຮູ້ແຈ້ງຊາບຊຶມກ່ຽວກັບຈຸດປະສົງ ແລະ ເນື້ອໃນຈິດໃຈຂອງຂໍ້ຕົກລົງວ່າ ດ້ວຍສິດນຳໃຊ້ຊັບພະຍາກອນປ່າໄມ້ຕາມປະເພນີເລກທີ 0054/ກປ ລົງວັນທີ 07/03/1996 ທີ່ໄດ້ຕິດຄັດມາພ້ອມນີ້.

2. ການອະທິບາຍເຜີຍແຜ່ ແມ່ນໃຫ້ເນັ້ນກ່ຽວກັບສິດຕາມປະເພນີ ທີ່ປະຕິບັດຢ່າງເປັນອິດສະລະຂອງປະຊາຊົນບັນດາເຜົ່າ ເປັນຕົ້ນແມ່ນຂອບເຂດການເກັບກູ້ຜົນຜະລິດປ່າໄມ້, ການລ່າເນື້ອ, ຫາປາໃຫ້ຖືກຕ້ອງສອດຄ່ອງກັບຂໍ້ກຳນົດລະບຽບ ແລະກົດໝາຍທີ່ໄດ້ວາງອອກ. ຊຶ່ງບໍ່ໄດ້ໝາຍຄວາມວ່າໃຜຢາກເຮັດຫຍັງກໍ່ໄດ້, ສິດຕາມປະເພນີອັນໃດທີ່ມັນເປັນການທຳລາຍກໍ່ຜົນເສຍຫາຍໃຫ້ສ່ວນລວມ ຫຼື ບຸກຄົນ ອື່ນ ຫຼື ຂັດກັບ ແນວທາງນະໂຍບາຍລະບຽບກົດໝາຍກໍ່ຄວນຈຳກັດ ເຊັ່ນ ປະເພນີຖາງປ່າຊະຊາຍ, ຈູດປ່າ ເພື່ອເປັນການລ່າເນື້ອ, ຕັນຫ້ວຍຮ່ອງຍາມ ປ່າຂຶ້ນໄຂ່ ດັ່ງນີ້ເປັນຕົ້ນ.

3. ການໂອນ ຫລື ການຈຳກັດ ແລະການຖອນສິດຕາມປະເພນີ ແມ່ນໃຫ້ປະຕິບັດຕາມປະເພນີ ທີ່ເຄີຍສືບທອດກັນມາ ໃນເມື່ອກ່ອນເຊັ່ນ :

ການໂອນສິດຕາມປະເພນີ ແມ່ນໂອນໄດ້ໂດຍການສືບທອດມໍລະດົກ ຫລື ດ້ວຍວິທີການອື່ນ ທີ່ໄດ້ຮັບຮູ້ຕາມປະເພນີຂອງການຈັດຕັ້ງ ຫລືກຸ່ມຄົນ ຫລື ຄອບຄົວທີ່ເປັນພົນລະເມືອງ ລາວເທົ່ານັ້ນ.

ການຮັບຮູ້, ການຈຳກັດ, ການຂະຫຍາຍ ຫລື ການລົບລ້າງສິດຕາມປະເພນີ ແມ່ນເປັນໄປໄດ້ໃນເງື່ອນໄຂດັ່ງນີ້ :

- ໂດຍການເຊື່ອມຫາຍເທື່ອລະນ້ອຍຂອງປະເພນີເກີດຂຶ້ນໃນເບື້ອງຕົ້ນ.
- ໂດຍການຕົກລົງເຫັນດີຂອງຜູ້ຖືສິດ ແລະຜູ້ຊົມໃຊ້ເອງໃຫ້ຈຳກັດ, ຂະຫຍາຍ, ແລກປ່ຽນ ແລະສະລະສິດດັ່ງກ່າວ.
- ໂດຍທາງກົດໝາຍ.
- ລັດຈະອອກກົດໝາຍ ເພື່ອຈຳກັດ, ຖອນສິດປະເພນີພາຍຫລັງທີ່ໄດ້ໃຊ້ຄວາມພະຍາຍາມໝົດທຸກວິທີໃນການຄູ້ມຄອງປ່າໄມ້ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.
- ນອກຈາກນັ້ນ ເມື່ອມີການສ່ຽງຕໍ່ການເສັຍຫາຍ ຜົນປະໂຫຍດຂອງຊາດ, ຄວາມເສຍຫາຍດັ່ງກ່າວສາມາດເກີດຂຶ້ນໄດ້ ເມື່ອມີການນຳໃຊ້ສິດທິ ທີ່ຈະນຳຜົນເສ່ຍຫາຍມາສູ່ທຳມະຊາດ . ແລະຊັບພະຍາ ກອນປ່າໄມ້ ໂດຍທີ່ໃຊ້ສັບພະຍາກອນປ່າໄມ້ບໍ່ສາມາດພື້ນຕົວຄືນໄດ້. ການຕີລາຄາຄວາມຮ້າຍແຮງ ຂອງຜົນເສຍຫາຍ ແມ່ນອີງໃສ່ມາດຕະຖານຂອງສາກົນ ແລະປະຕິບັດແຜນດຳເນີນງານປ່າໄມ້ ແຫ່ງຊາດ. ການພັດທະນາພະລັງງານໄຟຟ້ານ້ຳຕົກ, ການກໍ່ສ້າງຄົມມະນາຄົມ ແລະການາຂົນສົ່ງສາ ມາດຖືວ່າເປັນສິດຜົນປະໂຫຍດອັນສູງສຸດຂອງຊາດເຊັ່ນກັນ.

ການຈຳກັດ ຫລື ຖອນສິດຕາມປະເພນີ ຕ້ອງໄດ້ເຮັດໄປໃນລະດັບແຕ່ລະເມືອງ.

4. ການປ້ອງກັນສິດຕາມປະເພນີ ແມ່ນໃຫ້ປະຕິບັດ ແລະຖືກຮັບຮູ້ໂດຍຜູ້ນໍາໃຊ້ ແລະບຸກຄົນຜູ້ທີສາມ ໂດຍບໍ່ມີເງື່ອນໄຂຂັດຕໍ່ຂໍ້ກໍານົດລະບຽບການ ຫລື ກົດໝາຍທີ່ໄດ້ປະກາດໃຊ້ໄປແລ້ວນັ້ນ.

ການຮຽກຮ້ອງ ຫລື ການຮ້ອງຟ້ອງເອົາສິດທີ່ຖືກຕ້ອງຂອງບຸກຄົນ ຫລື ກຸ່ມຄົນໃຫ້ແກ້ໄຂດ້ວຍວິທີການຕາມປະເພນີທີ່ເປັນມູນເຊື້ອອັນດີງາມຂອງປະຊາຊົນລາວບັນດາເຜົ່າຕ່າງໆ ແລະໃຫ້ມີການ ໄກ່ເກ່ຍຢູ່ຂັ້ນບ້ານເປັນຕົ້ນຕໍ, ແຕ່ຖ້າ ຫາກໃຊ້ໝົດຄວາມພະຍາຍາມແລ້ວ ແຕ່ຍັງແກ້ໄຂບໍ່ຕົກ ຈຶ່ງ ນໍາສະເໜີໃຫ້ສານພິຈາລະນາຕາມລະບຽບກົດໝາຍ.

5. ການທົດແທນຄ່າເສຍຫາຍກ່ຽວກັບການຖອນສິດຕາມປະເພນີ ໂດຍສະເພາະຕໍ່ການນໍາໃຊ້ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ກໍານົດ ແລະທົດແທນຄ່າເສຍຫາຍທັງໝົດຕໍ່ທຸກບັນຫາຂອງການເສຍຫາຍທີ່ພົວພັນເຖິງການດໍາລົງຊີວິດຂອງຜູ້ຜະລິດ ແລະນໍາໃຊ້ສິດນັ້ນ, ການທົດແທນອາດ ຈະເປັນເງິນຫລື ວັດຖຸອຸປະກອນ ຫລື ດ້ວຍການຈັດສັນໃຫ້ດໍາລົງຊີວິດແບບໃໝ່ ທີ່ສົມເຫດສົມຜົນ ເຊັ່ນ :

- ໃຊ້ແທນຄ່າເສຍຫາຍທີ່ເກີດຈາກຈາກການຍົກຍ້າຍໃນພາກສະໜາມ.
- ການຊ່ວຍເຫລືອໃຫ້ແກ່ການປຸ່ງແປງ ຫລື ຍົກຍ້າຍ ຫລື ອຸດໜູນໃນໄລຍະການຍົກຍ້າຍນັ້ນໄປຢູ່ສະຖານທີ່ອື່ນໆ ແລະ,
- ການຊ່ວຍເຫລືອຜູ້ຖືສິດດ້ວຍການຍົກລະດັບຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ທຽບເທົ່າລະດັບເດີມທາງດ້ານຄວາມອາດສາມາດໃນການສ້າງລາຍຮັບ ຫລື ການຜະລິດຕ່າງໆ.

6. ສິດນໍາໃຊ້ຊັບພະຍາກອນປ່າໄມ້ຢູ່ໃນເຂດເຂດບ້ານ ແມ່ນດັ່ງນີ້ :

- ສິດເກັບກູ້ຜະລິດຕະພົນຈາກປ່າໄມ້ສໍາລັບໃຊ້ສອຍຕາມຄວາມຈໍາເປັນຂອງຄອບຄົວເຊັ່ນ : ການອະນຸຍາດໃຫ້ໄປຫາຢູ່ຫາກິນ ເພື່ອຂຸດກພືນດັງ, ເກັບເຫັດ, ເກັບຜັກປ່າ, ຫາໜໍ່ໄມ້, ຢາພື້ນເມືອງ, ຕັດຫຼັກຮົ້ວເພື່ອໃຊ້ສອຍໃນຄອບຄົວ ຫລື ເກັບກູ້ປະເພດເຄື່ອງປ່າຂອງດົງອື່ນໆ ທີ່ບໍ່ໄດ້ນອນຢູ່ໃນບັນຊີທີ່ເກືອດຫ້າມຕາມທີ່ໄດ້ກໍານົດໃນສັນຍາການຄຸ້ມຄອງປ່າໄມ້ຂັ້ນບ້ານ, ສ່ວນການຕັດຕົ້ນໄມ້ທໍາມະຊາດຊຶ່ງບໍ່ແມ່ນປະເພດໄມ້ຫວງຫ້າມ ແລະ ເຂດສະຫງວນເພື່ອຮັບໃຊ້ເຂົ້າໃນການສ້ອມແປງເຮືອນຊານຕ່າງໆ ທີ່ມີຄວາມຈໍາເປັນຢູ່ໃນເຂດປ່າໄມ້ບ້ານທີ່ອະນຸຍາດໃຫ້ຄຸ້ມຄອງແລະປົກປັກຮັກສານັ້ນ ແມ່ນໃຫ້ປະຕິບັດຕາມລະບຽບການຂອງປ່າໄມ້ວາງອອກ ແຕ່ລະໄລຍະ.
- ເກັບກູ້ຜະລິດຕະພົນປ່າໄມ້ຊະນິດຕ່າງໆທີ່ມີຢູ່ຢ່າງອຸດົມສົມບູນໃນເຂດທີ່ບໍ່ໄດ້ຫວງຫ້າມເພື່ອເປັນສິນຄ້ານໍາມາຂາຍແມ່ນຕ້ອງຢູ່ໃນຂອບເຂດປະລິມານຂອງຊັບພະຍາກອນປ່າໄມ້ ທີ່ສາມາດຄົງຕົວແລະຂະຫຍາຍຕົວໄດ້ໃນເຂດນັ້ນແຕ່ຕ້ອງໄດ້ຮັບອະນຸຍາດຈາກຂະແໜງປ່າໄມ້ແຂວງໂດຍຜ່ານການຄົ້ນຄ້ວາຈາກຫ້ອງການກະສິກໍາ-ປ່າໄມ້ເມືອງແລະເຫັນດີຈາກອໍານາດການປົກຄອງເມືອງຢ່າງເປັນທາງການ

- ສິດໃນການລ່າສັດ, ຫາປາ ທີ່ບໍ່ນອນຢູ່ໃນບັນຊີຫວງຫ້າມ ຊຶ່ງຢູ່ນອກເຂດຫວງຫ້າມ ແມ່ນໃຫ້ປະຕິບັດຖືກຕ້ອງຕາມກົດໝາຍ,
- ສ່ວນການນຳໃຊ້ສິດທິດິນປ່າໄມ້ຊຸດໂຊມ ຫລື ດິນປອກໂລ້ນ ຕາມເນື້ອທີ່ ທີ່ໄດ້ມີການສຳລວດຈັດສັນຕາມແຜນພັດທະນາເສດຖະກິດສັງຄົມຂອງບ້ານແມ່ນໃຫ້ມີການເຫັນດີຕົກລົງຈາກຄະນະກຳມະການ ຫລື ວິຊາການໃນການແບ່ງດິນແບ່ງປ່າ ຫລື ການຈັດຕັ້ງທີ່ມີສິດອຳນາດຂັ້ນເມືອງ.
- ຢູ່ໃນຂັ້ນບ້ານ ແມ່ນມີສິດຈັດຕັ້ງກຸ່ມຜະລິດ ແລະຊົມໃຊ້ ເພື່ອເກັບກູ້ ແລະຂາຍເຄື່ອງປ່າຂອງດົງຕາມກຳນົດໃນສັນຍາຄຸ້ມຄອງຂອງຂະແໜງການປ່າໄມ້ຂອງແຂວງທີ່ອອກໃຫ້ນັ້ນ.
- ສ່ວນການເກັບກູ້ເຄື່ອງປ່າຂອງດົງ,ການຕັດໄມ້ປະເພດຫວງຫ້າມເພື່ອການຄ້າຈາກບຸກຄົນພາຍນອກນັ້ນ, ບ້ານກ່ຽວຂ້ອງມີສິດປົກປ້ອງຕາມລະບຽບກົດຫມາຍກົດໝາຍ.

7. ອຳນາດການປົກຄອງບ້ານ ແມ່ນມີສິດເຮັດກົດລະບຽບລະອຽດສະເພາະຕື່ມອີກ ເພື່ອໃຫ້ແທດເໝາະກັບເນື້ອໃນຈິດໃຈຂອງບົດແນະນຳດັ່ງກ່າວ ແລະເພື່ອໃຫ້ຖືກຕ້ອງຕາມຕົວຈິງ ແລະຈຸດພິເສດຂອງແຕ່ລະບ້ານ ຫລື ຕາມຈຸດພິເສດຂອງແຕ່ລະຮີດຄອງປະເພນີຂອງແຕ່ລະເຜົ່າຊົນ.

8. ໃນກໍລະນີຜິດຕໍ່ກົດໝາຍກ່ຽວກັບການນຳໃຊ້ສິດຕາມປະເພນີ, ການຈັດຕັ້ງທີ່ກ່ຽວຂ້ອງເບື້ອງຕົ້ນ ພະແນກກະສິກຳ-ປ່າໄມ້ແຂວງ, ຫ້ອງການກະສິກຳ-ປ່າໄມ້ເມືອງ ແມ່ນເປັນເຈົ້າການຮັບຜິດຊອບຕໍ່ວຽກງານດັ່ງກ່າວ ແລະມີສິດນຳສະເໜີລາຍງານຕໍ່ຂັ້ນເທິງຂອງຕົນຕາມລຳດັບຕາມທີ່ເໝາະສົມ.

ດັ່ງນັ້ນ, ຈຶ່ງສະເໜີມາເພື່ອຊາບໂດຍທົ່ວເຖິງກັນ.

ວຽງຈັນ, ວັນທີ ....17..APR 1996

ລັດຖະມົນຕີກະຊວງກະສິກຳ-ປ່າໄມ້

<u>ສຳເນົາ :</u>

- ພະແນກກະສິກຳ-ປ່າໄມ້ແຂວງ
  ທຸກໆແຂວງ (ເພື່ອຊາບແລະປະຕິບັດ)
  ຫ້ອງການກະສິກຳ-ປ່າໄມ້ເມືອງ
  (ເພື່ອຊາບແລະປະຕິບັດ)
- ກົມປ່າໄມ້ (ເພື່ອຊາບແລະຕິດຕາມການຈັດຕັ້ງປະຕິບັດ)
- ເກັບມ້ຽນ.

ສີສະຫວາດ ແກ້ວບຸນພັນ